# Working Connections Child Care (ການເຊື່ອມຕໍ່ການເຮັດວຽກການດູແລເດັກ)



Working Connections Child Care (ການເຊື່ອມຕໍ່ການເຮັດວຽກການດູແລເດັກ, WCCC) ຊ່ວຍບັນດາຄອບຄົວທີ່ມີສິດຈ່າຍຄ່າດູແລເດັກ. ເມື່ອຄອບຄົວມີສິດໄດ້ຮັບເງິນຊ່ວຍເຫຼືອການລ້ຽງດູເດັກ ແລະ ເລືອກຜູ້ໃຫ້ບໍລິການທີ່ມີສິດໄດ້ຮັບ, ລັດຈະຈ່າຍສ່ວນໜຶ່ງຂອງຄ່າໃຊ້ຈ່າຍໃນການດູແລເດັກ. ໃນແຕ່ລະເດືອນພໍ່ແມ່ອາດຈະຮັບຜິດຊອບຄ່າຮ່ວມຈ່າຍກັບຜູ້ໃຫ້ບໍລິການຂອງພວກເຂົາ.

## ຂໍ້ກໍານົດການມີສິດໄດ້ຮັບພື້ນຖານ

### *ສໍາລັບຜົນປະໂຫຍດເງິນຊ່ວຍເຫຼືອການດູແລເດັກ*

- ເດັກຕ້ອງເປັນພົນລະເມືອງສະຫະລັດ, ມີທີ່ຢູ່ອາໄສທີ່ຖືກຕ້ອງຕາມກົດໝາຍ, ຫຼື ມີສິດໄດ້ຮັບເງິນຊ່ວຍເຫຼືອຂອງລັດຖະບານກາງ
- ຄອບຄົວທີ່ເດັກອາໄສຢູ່ຕ້ອງອາໄສຢູ່ໃນລັດ Washington
- ລາຍຮັບຂອງຄອບຄົວຕ້ອງຢູ່ທີ່ ຫຼື ຕໍ່າກວ່າ 60% ຂອງ State Median Income (ລາຍຮັບສະເລ່ຍຂອງລັດ, SMI) ເມື່ອສະໝັກ ຫຼື 65% ຂອງ SMI ເມື່ອສະໝັກຄືນໃໝ່
- ຄອບຄົວຕ້ອງມີຊັບພະຍາກອນຕໍ່າກວ່າ $1 ລ້ານ
- ເງິນຊ່ວຍເຫຼືອການດູແລເດັກຊ່ວຍຈ່າຍຄ່າດູແລເດັກໃນຂະນະທີ່ພໍ່ແມ່, ຫຼື ບັນດາພໍ່ແມ່ໃນຄອບຄົວທີ່ມີພໍ່ແມ່ສອງຄົນ, ເຂົ້າຮ່ວມໃນກິດຈະກໍາທີ່ໄດ້ຮັບການອະນຸມັດ. ກິດຈະກໍາທີ່ໄດ້ຮັບການອະນຸມັດໄດ້ແກ່:
  - ການຈ້າງງານ ຫຼື ການປະກອບອາຊີບເປັນອິດສະຫຼະທາງດ້ານກົດໝາຍ, ການສ້າງລາຍຮັບ, ກິດຈະກໍາທີ່ຕ້ອງເສຍພາສີ
  - ກິດຈະກໍາທີ່ໄດ້ຮັບການອະນຸມັດພາຍໃຕ້ແຜນການ WorkFirst ຫຼື BFET ຂອງພໍ່ແມ່
  - ກິດຈະກໍາການສຶກສາໄດ້ແກ່:
    - ໂຄງການໂຮງຮຽນມັດທະຍົມສຶກສາ ຫຼື ໂຄງການທຽບເທົ່າໂຮງຮຽນມັດທະຍົມສຶກສາ ສໍາລັບພໍ່ແມ່ທີ່ມີອາຍຸ 21 ປີ ຫຼື ຕໍ່າກວ່າ
    - ເຂົ້າຮຽນວິທະຍາໄລຊຸມຊົນ, ວິທະຍາໄລເຕັກນິກ, ຫຼື ວິທະຍາໄລຊົນເຜົ່າເຕັມເວລາ ແລະ ກໍາລັງຊອກຫາລະດັບປະລິນຍາຕີ ຫຼື ວິຊາຊີບ
    - ເຂົ້າຮຽນວິທະຍາໄລຊຸມຊົນ, ວິທະຍາໄລເຕັກນິກ, ຫຼື ວິທະຍາໄລຊົນເຜົ່າທີ່ບໍ່ເຕັມເວລາ ແລະ ຊອກກໍາລັງຊອກຫາລະດັບປະລິນຍາຕີ ຫຼື ວິຊາຊີບ ແລະ ເຮັດວຽກ 20 ຊົ່ວໂມງຕໍ່ອາທິດ
- ຄອບຄົວທີ່ປະສົບກັບບັນຫາການຂາດທີ່ຢູ່ອາໄສ ອາດຈະສາມາດໄດ້ຮັບການອະນຸມັດເປັນເວລານານເຖິງ 12 ເດືອນ ເພື່ອຊ່ວຍແກ້ໄຂບັນຫາກ່ຽວກັບການຂາດທີ່ຢູ່ອາໄສ

*ຖ້າທ່ານຕ້ອງການສໍາເນົາຂອງເອກະສານນີ້ ໃນຮູບແບບອື່ນ ຫຼື ພາສາອື່ນ, ກະລຸນາຕິດຕໍ່ DCYF Constituent Relations (ຝ່າຍປະຊາສໍາພັນຂອງສະຖາບັນ) ທີ່ (1-800-723-4831 | 360-902-8060,* ***ConstRelations@dcyf.wa.gov****).*

DCYF PUBLICATION EPS_0075 LA (05-2022) Lao

Washington State Department of
CHILDREN, YOUTH & FAMILIES

## ການມີສິດໄດ້ຮັບຕາມລາຍໄດ້

ລາຍຮັບຂອງຄອບຄົວສູງສຸດແມ່ນ 60% ຂອງ State Median Income (ລາຍຮັບສະເລ່ຍຂອງລັດ, SMI). ຂີດຈຳກັດຂອງລາຍຮັບເປັນລາຍເດືອນສູງສຸດຕາມຂະໜາດຄອບຄົວແມ່ນໄດ້ລະບຸໄວ້ຂ້າງລຸ່ມນີ້:



| ຂະໜາດຄອບຄົວ | 0 ເຖິງ 20% ຂອງລາຍຮັບສະເລ່ຍຂອງລັດ<br>ບໍ່ມີຄ່າຮ່ວມຈ່າຍ | ສູງກວ່າ 20% ເຖິງ 36% ຂອງລາຍຮັບສະເລ່ຍຂອງລັດ<br>ມີຄ່າຮ່ວມຈ່າຍ *$65* | ສູງກວ່າ 36% ເຖິງ 50% ຂອງລາຍຮັບສະເລ່ຍຂອງລັດ<br>ມີຄ່າຮ່ວມຈ່າຍ *$90* | ສູງກວ່າ 50% ເຖິງ 60% ຂອງລາຍຮັບສະເລ່ຍຂອງລັດ<br>ມີຄ່າຮ່ວມຈ່າຍ *$115* | ສູງກວ່າ 60% ເຖິງ 65% ຂອງລາຍຮັບສະເລ່ຍຂອງລັດ<br>ມີຄ່າຮ່ວມຈ່າຍ *$215* | ສູງກວ່າ 85% ຂອງລາຍຮັບສະເລ່ຍຂອງລັດ<br>ຂີດຈຳກັດຂອງລາຍຮັບ |
|---|---|---|---|---|---|---|
| 1 | $0-$928 | $929-$1,671 | $1,672-$2,320 | $2,321-$2,784 | $2,785-$3,016 | $3,944 |
| 2 | $0-$1,214 | $1,215-$2,185 | $2,186-$3,034 | $3,035-$3,641 | $3,642-$3,944 | $5,158 |
| 3 | $0-$1,499 | $1,500-$2,699 | $2,700-$3,748 | $3,749-$4,498 | $4,499-$4,872 | $6,372 |
| 4 | $0-$1,785 | $1,786-$3,213 | $3,214-$4,462 | $4,463-$5,354 | $5,355-$5,800 | $7,585 |
| 5 | $0-$2,070 | $2,071-$3,727 | $3,728-$5,176 | $5,177-$6,211 | $6,212-$6,729 | $8,799 |
| 6 | $0-$2,356 | $2,357-$4,241 | $4,242-$5,890 | $5,891-$7,068 | $7,069-$7,657 | $10,012 |
| 7 | $0-$2,409 | $2,410-$4,337 | $4,338-$6,024 | $6,025-$7,228 | $7,229-$7831 | $10,240 |
| 8 | $0-$2,463 | $2,464-$4,433 | $4,434-$6,157 | $6,158-$7,389 | $7,390-$8,005 | $10,468 |
| 9 | $0-$2,517 | $2,517-$4,530 | $4,531-$6,291 | $6,292-$7,550 | $7,551-$8,179 | $10,695 |
| 10 | $0-$2,570 | $2,571-$4,626 | $4,627-$6,425 | $6,426-$7,710 | $7,711-$8,353 | $10,923 |

ໃຊ້ຕາຕະລາງຂ້າງເທິງ ເພື່ອກຳນົດວ່າຄອບຄົວຂອງທ່ານອາດຈະມີສິດໄດ້ຮັບ WCCC ຫຼື ບໍ່ ແລະ ເພື່ອກຳນົດຄ່າຮ່ວມຈ່າຍໂດຍປະມານຂອງທ່ານ. ຕົວຢ່າງ: ຖ້າຄອບຄົວຂອງທ່ານປະກອບມີຕົວທ່ານເອງ, ຜົວ ຫຼື ເມຍຂອງທ່ານ, ແລະ ລູກສອງຄົນ, ສະແດງວ່າຂະໜາດຄອບຄົວຂອງທ່ານແມ່ນມີສີ່ຄົນ. ຖ້າລາຍຮັບຂອງທ່ານແມ່ນ $4,100, ຄ່າຮ່ວມຈ່າຍຂອງທ່ານຈະເປັນ $90 ຕໍ່ເດືອນ.

- ຕາຕະລາງການຄິດໄລ່ຄ່າຮ່ວມຈ່າຍ - ມີຜົນບັງຄັບໃຊ້ໃນ ວັນທີ 1, ເມສາ, 2022 ເປັນຕົ້ນໄປ: **www.dcyf.wa.gov/sites/default/files/pdf/copay_calculation_table.pdf**

## ຂະບວນການສະໝັກ

ພໍ່ແມ່ຕ້ອງເຮັດໃຫ້ສຳເລັດໃບຄຳຮ້ອງສະໝັກ WCCC ແລະ ຂະບວນການຢັ້ງຢືນ.

- ບັນດາຄອບຄົວສາມາດສະໝັກໄດ້ໂດຍການຕິດຕໍ່ຫາ Child Care Subsidy Contact Center (ສູນຕິດຕໍ່ການສະໜັບສະໜູນການດູແລເດັກ) ທີ່ 1-844-626-8687 ຫຼື ທາງອອນໄລນ໌ທີ່ **www.WashingtonConnection.org**
- DCYF ລວບລວມ ແລະ ທົບທວນຄືນຂໍ້ມູນ ເພື່ອກຳນົດການມີສິດໄດ້ຮັບຂອງຄອບຄົວ
- ບັນດາຄອບຄົວຕ້ອງໃຫ້ຊື່ ແລະ ເບີໂທລະສັບຂອງຜູ້ໃຫ້ບໍລິການດູແລເດັກແກ່ DCYF. ທ່ານບໍ່ຈຳເປັນຕ້ອງມີຜູ້ໃຫ້ບໍລິການກ່ອນທີ່ຈະສະໝັກຂໍເງິນຊ່ວຍເຫຼືອການດູແລເດັກ

## ມີຄຳຖາມບໍ?

ບັນດາຄອບຄົວ ຫຼື ພໍ່ແມ່ທີ່ມີຄຳຖາມກ່ຽວກັບຄ່າຮ່ວມຈ່າຍຂອງພວກເຂົາ ອາດຈະສາມາດໂທຫາ **DCYF Child Care Contact Center** (ສູນຕິດຕໍ່ການດູແລເດັກ) ທີ່ **1-844-626-8687**.

ຂໍ້ມູນເພີ່ມເຕີມກ່ຽວກັບການມີສິດໄດ້ WCCC ສາມາດເບິ່ງໄດ້ທາງອອນໄລນ໌ທີ່ **www.dcyf.wa.gov/services/earlylearning-childcare/getting-help/wccc**.